**ວັນທີ 13 ພະຈິກ 2013**

**<u>ບົດຖະແຫຼງຂ່າວ</u>**
**ກ່ຽວກັບ ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ປີ 2013**
**ໂດຍທ່ານ ສົມຈິດ ອິນທະມິດ, ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ**
**ທີ່ ສະມາຄົມນັກຂ່າວ, ນະຄອນຫຼວງວຽງຈັນ, ຄັ້ງວັນທີ 13 ພະຈິກ 2013**

ສະບາຍດີ ບັນດາ ເພື່ອນສື່ມວນຊົນທີ່ມີກຽດ ແລະ ຮັກແພງ ທັງຫຼາຍ,

ຂ້າພະເຈົ້າ ໃນນາມຕາງໜ້າໃຫ້ຄະນະນຳກະຊວງແຜນການ ແລະ ການລົງທຶນ ກໍ່ຄືໃນນາມຄະນະຊີ້ນຳ ລະດັບຊາດ ເພື່ອຂະບວນການໂຕະມົນ ມີຄວາມຍິນດີເປັນຢ່າງຍິ່ງ ທີ່ໄດ້ຮ່ວມກັບ ທ່ານ ມິງ ຟາມ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຫົວໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ຈັດກອງປະຊຸມຖະແຫຼງຂ່າວ ກ່ຽວກັບ ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ປະຈຳປີ 2013.

ກ່ອນອື່ນ, ຂ້າພະເຈົ້າ ຂໍກ່າວເຖິງຄວາມເປັນມາ ກ່ຽວກັບວຽກງານຂະບວນການໂຕະມົນ ກໍ່ຄືກອງປະຊຸມໂຕະມົນ, ຊຶ່ງໃນໄລຍະຜ່ານມາ ໄດ້ຈັດຂຶ້ນ ຢູ່ທີ່ ເຈນີວາ, ປະເທດສະວິດເຊີແລນ ຄັ້ງທີ່ 1ໄດ້ຈັດຂຶ້ນ ໃນປີ 1983. ເພື່ອຍົກສູງຄວາມເປັນເຈົ້າການຂອງລັດຖະບານ ກອງປະຊຸມໂຕະມົນ ຈຶ່ງໄດ້ຍ້າຍມາຈັດຢູ່ ສປປລາວ ເລີ້ມແຕ່ປີ 1999 ເປັນຕົ້ນມາ ໂດຍການສະໜັບສະໜູນ ຂອງອົງການ ສປຊ ເພື່ອການພັດທະນາ (UNDP).

ຂະບວນການໂຕະມົນແມ່ນເວທີທີ່ມີເອກະລັກສະເພາະທີ່ສົ່ງເສີມວຽກງານການຮ່ວມມື, ປະສານງານ ແລະ ສ້າງຄວາມເຂົ້າໃຈທີ່ເປັນເອກະພາບ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ ດ້ວຍຮູບການປຶກສາຫາລືກັນ ກ່ຽວກັບ ວຽກງານການພັດທະນາປະເທດຊາດ ພ້ອມທັງເສີມສ້າງປະສິດທິຜົນຂອງການພັດທະນາ. ຂະບວນການໂຕະມົນແມ່ນຢູ່ພາຍໃຕ້ ການຊີ້ນຳ-ນຳພາ ຂອງລັດຖະບານແຫ່ງ ສປປ ລາວ ຊຶ່ງມີຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ໂດຍແມ່ນ ພະນະທ່ານ ນາຍົກລັດ ຖະມົນຕີ ແຫ່ງ ສປປ ລາວ ໃຫ້ກຽດເປັນປະທານ.

ຂະບວນການໂຕະມົນປະກອບດ້ວຍ 3 ລະດັບຄື:

i. ກອງປະຊຸມໂຕະມົນລະດັບສູງ (RTM): ກອງປະຊຸມໂຕະມົນລະດັບສູງຈັດຂຶ້ນທຸກໆ 3 ປີ ເພື່ອທົບທວນບັນດາແຜນ, ຍຸດທະສາດ ແລະ ແຜນງານ ຂອງລັດຖະບານ; ສ້າງຄວາມເປັນເອກະພາບກ່ຽວກັບບູລິມະສິດຂອງການພັດທະນາ; ແລະ ຮອບຮວມການຊ່ວຍເຫຼືອດ້ານທຶນຮອນ ແລະ ຊັບພະຍາກອນມະນຸດ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານ.
ii. ກອງປະຊຸມຈັດຕັ້ງປະຕິບັດຂະບວນການໂຕະມົນປະຈຳປີ (RTIM): ກອງປະຊຸມຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນຈັດຂຶ້ນທຸກໆປີ ເພື່ອທົບທວນໝາກຜົນຂອງການຈັດຕັ້ງປະຕິບັດ; ຂໍ້ສະເໜີເພື່ອດັດປັບ ແລະ ມາດຕະການໃນຕໍ່ໜ້າ; ລວມທັງກອງປະຊຸມປຶກສາຫາລື ຢູ່ຂັ້ນທ້ອງຖິ່ນເພື່ອສັງລວມເອົາບັນຫາ ແລະ ຄຳຄິດຄຳເຫັນ ກ່ຽວກັບສິ່ງທ້າທາຍ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານການພັດທະນາຢູ່ຂັ້ນທ້ອງຖິ່ນຮາກຖານມາຮ່ວມປຶກສາຫາລືກັບຂັ້ນສູນກາງ.
iii. ກອງປະຊຸມບັນດາໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ (SWG) ແລະ ນຳເອົາຜົນຂອງການປຶກສາຫາລືດັ່ງກ່າວ ໄປສະເໜີຕໍ່ກອງປະຊຸມໂຕະມົນລະດັບຕ່າງໆ. ໃນໄລຍະຜ່ານມາ ກອງປະຊຸມບັນດາໜ່ວຍງານຂະແໜງການແມ່ນໄດ້ຈັດຂຶ້ນຢ່າງເປັນປົກກະຕິ ເຊິ່ງເປັນປະທານໂດຍ ກະຊວງຂະແໜງການກ່ຽວຂ້ອງ ແລະ ປະທານຮ່ວມໂດຍ ຄູ່ຮ່ວມພັດທະນາ ເພື່ອປະສານງານ ດ້ານນະໂຍບາຍ ແລະ ແຫຼ່ງຊັບພະຍາ ກອນ.

ພວກເຮົາເຫັນວ່າ ກອງປະຊຸມໂຕະມົນ ແມ່ນເວທີທີ່ມີຄວາມໝາຍສຳຄັນຍິ່ງ ເພາະກອງປະຊຸມໂຕະມົນ ໄດ້ສ້າງກາລະໂອກາດໃຫ້ແກ່ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ມີການທົບທວນ, ປຶກສາຫາລືບັນຫາຕ່າງໆ ທີ່ທັງສອງຝ່າຍໄດ້ໃຫ້ຄຳໝັ້ນສັນຍານຳກັນ. ໃນໄລຍະ 3 ປີ ທີ່ຜ່ານມາ ພວກເຮົາສາມາດຂົນຂວາຍ ຍາດແຍ່ງ ແລະ ຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບການຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເຖິງ 2.109 ລ້ານໂດລາສະຫະລັດ (ທຽບເທົ່າ 52,72% ຂອງແຜນ 5 ປີ) ແຕ່ຖ້າທຽບໃສ່ແຜນການປະຈຳປີ ແມ່ນສາມາດບັນລຸໄດ້ຕາມຄາດໝາຍ (630 ລ້ານໂດລາສະຫະລັດ ໃນປີ 2010-11 ສົມທຽບແຜນ 600 ລ້ານໂດລາສະຫະລັດ; 704 ລ້ານໂດລາສະຫະລັດ ໃນປີ 2011-12 ສົມທຽບແຜນ 700 ລ້ານໂດລາສະຫະລັດ; ແລະ 777,10 ລ້ານໂດລາສະຫະລັດ ໃນປີ 2012-13 ສົມທຽບແຜນ 775 ລ້ານໂດລາສະຫະລັດ).

ສຳລັບກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ທີ່ຈະໄດ້ຈັດຂຶ້ນໃນອາທິດໜ້ານີ້ ຢູ່ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ວັນທີ 19 ພະຈິກ ນີ້ ແມ່ນຈະໄດ້ສຸມໃສ່ການປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ລະຫວ່າງ ລັດຖະບານ ແຫ່ງ ສປປລາວ ແລະ ບັນດາຄູ່ຮ່ວມພັດທະນາ ກ່ຽວກັບວຽກງານການພັດທະນາ ທີ່ເປັນບູລິມະສິດແຫ່ງຊາດ, ລະດົມທຶນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ຮັບປະກັນການປະສານງານ ແລະ ການຮ່ວມມືໃຫ້ມີປະສິດທິຜົນ. ເຊິ່ງຈະມີຜູ້ເຂົ້າຮ່ວມຈາກ ທັງພາຍໃນ ແລະ ຕ່າງປະເທດ ທັງໝົດ ປະມານ **400** ກວ່າທ່ານ ຈາກພາກສ່ວນລັດຖະບານ ທັງສູນກາງ ແລະ ທ້ອງຖິ່ນ, ບັນດາ ທູຕານຸທູດ, ຜູ້ຕາງໜ້າຈາກອົງການ ຈັດຕັ້ງສາກົນ ແລະ ສະຖາບັນການເງິນສາກົນ ປະຈຳຢູ່ສຳນັກງານໃຫຍ່ ກໍ່ຄືຢູ່ນະຄອນຫລວງວຽງຈັນ.

ກອງປະຊຸມດັ່ງກ່າວ ໄດ້ຮັບກຽດ ກ່າວໄຂກອງປະຊຸມ ໂດຍ ພະນະ ທ່ານ ທອງສິງ ທຳມະວົງ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ. ພ້ອມດຽວກັນນີ້, ກອງປະຊຸມຈະໄດ້ດຳເນີນໄປພາຍໃຕ້ການເປັນປະທານ ຂອງ ພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກ ລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ແລະ ການເປັນປະທານຮ່ວມ ຂອງ ພະນະ ທ່ານ ຮາວລຽງ ຊູ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນ ຫົວໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ສຳລັບຂົງເຂດພາກພື້ນອາຊີ-ປາຊີຟິກ.

ຄາດໝາຍຂອງກອງປະຊຸມໂຕະມົນລະດັບສູງ ໃນປີນີ້ ແມ່ນ: ເພື່ອໃຫ້ບັນດາຄູ່ຮ່ວມພັດທະນາ ເຂົ້າໃຈ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະ ຜົນຂອງການທົບທວນ ກາງສະໄໝແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ 7 (2011-2015); ລວມທັງຜົນຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2012-2013 ແລະ ແຜນ 2013-2014 ຊຶ່ງຈຸດສຸມແມ່ນເລັ່ງໃສ່ ຈັດຕັ້ງປະຕິບັດ ບັນດາແຜນງານບູລິມະສິດ ລວມທັງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ.

ແຕ່ຄວາມຕ້ອງການ ແລະ ຄາດຄະເນທຶນຮອນລວມ ແຕ່ນີ້ຮອດປີ 2015 ແມ່ນ 1.220 ລ້ານໂດລາສະຫະລັດ ສຳລັບວຽກງານການລົງທຶນ ແລະ 400 ລ້ານໂດລາສະຫະລັດ ສຳລັບວຽກງານການສ້າງຂີດຄວາມສາມາດ ດ້ານວິຊາການ. ໃນນັ້ນ ໃນສົກປີ 2013-2014 ODA ສຳລັບວຽກງານການລົງທຶນ ແມ່ນ 600 ລ້ານໂດລາສະຫະລັດ ແລະ 195 ລ້ານໂດລາສະຫະລັດ ສຳລັບວຽກງານການສ້າງຂີດຄວາມສາມາດ ດ້ານວິຊາການ. ສຳລັບ ສົກປີ 2014-2015, ODA ສຳລັບວຽກງານການລົງທຶນ ແມ່ນ 620 ລ້ານໂດລາສະຫະລັດ ແລະ 205 ລ້ານໂດລາສະຫະລັດ ສຳລັບວຽກງານການສ້າງຂີດຄວາມສາມາດ ດ້ານວິຊາການ. ພ້ອມດຽວກັນນັ້ນ, ພວກເຮົາຍັງຕ້ອງການທຶນຮອນເພີ່ມເຕີມ ຫຼາຍກວ່າ 300 ລ້ານໂດລາສະຫະລັດ ຕໍ່ປີ ເພື່ອເລັ່ງລັດຈັດຕັ້ງປະຕິບັດບັນດາເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໂດຍສະເພາະເປົ້າໝາຍທີ່ຍັງປະຕິບັດບໍ່ໄດ້ຕາມຄາດໝາຍ.

ກອງປະຊຸມດັ່ງກ່າວ ຈະໄດ້ສຸມໃສ່ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ໃສ່ບັນດາຫົວຂໍ້ ຕ່າງໆ ລຸ່ມນີ້ :

1. ຜົນຂອງການທົບທວນກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VII ໂດຍສະເພາະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແລະ ທິດທາງໃນຕໍ່ໜ້າ;
2. ຄວາມຄືບໜ້າ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ທິດທາງໃນຕໍ່ໜ້າເພື່ອບັນລຸເປົ້າໝາຍທີ່ຍັງປະຕິບັດບໍ່ໄດ້ຕາມຄາດໝາຍ;
3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານການປົກຄອງ: ການມີສ່ວນຮ່ວມຂອງປະຊາຊົນ, ການປົກຄອງ ດ້ວຍລັດ ແລະ ກົດໝາຍ ແລະ ການປັບປຸງການບໍລິການຂອງພາກລັດ;
4. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານການເງິນ ແລະ ບາດກ້າວສຳຄັນ ຂອງຂະແໜງການດັ່ງກ່າວ ເພື່ອບັນລຸແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ໃນໄລຍະທີ່ຍັງເຫຼືອ;
5. ການສ້າງຄວາມເຂັ້ມແຂງຂອງການເປັນຄູ່ຮ່ວມ ເພື່ອຍົກສູງປະສິດທິຜົນຂອງການພັດທະນາ;
6. ທິດທາງຍຸດທະສາດ ເພື່ອເລັ່ງລັດການບັນລຸແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ VII ລວມທັງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ທິດທາງສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020).

ພາຍຫຼັງສຳເລັດກອງປະຊຸມ, ໃນຕອນເຊົ້າ ຂອງວັນທີ 20 ພະຈິກ 2013, ພະນະທ່ານ ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ຈະໄດ້ນຳພາ ບັນດາຄູ່ຮ່ວມພັດທະນາ ເຂົ້າຢ້ຽມຂໍ່ານັບ ພະນະທ່ານ ຈູມມະລີ ໄຊຍະສອນ, ປະທານປະເທດ ແຫ່ງ ສປປ ລາວ ເພື່ອລາຍງານ ຜົນສຳເລັດຂອງກອງປະຊຸມໂຕະມົນລະດັບສູງຄັ້ງນີ້. ຫຼັງຈາກນັ້ນ, ຈະໄດ້ນຳພາຄະນະ ຜູ້ແທນ ຂຶ້ນໄປຢ້ຽມຢາມ ໂຄງການພັດທະນາ ຢູ່ແຂວງຫຼວງພະບາງ ເພື່ອໃຫ້ບັນດາຄູ່ຮ່ວມພັດທະນາເຫັນໄດ້ ສະພາບການນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ເຂົ້າໃນການບັນລູເປົ້າໝາຍສະຫັດສະຫັດດ້ານການພັດທະນາ ໂດຍສະເພາະ ກິດຈະກຳຂອງຂະແໜງສາທາລະນະສຸກ, ກະສິກຳ ແລະ ເກັບກູ້ລະເບີດບໍ່ທັນແຕກ ລວມທັງສັງເກດເບິ່ງປະສິດທິຜົນ ຂອງການຈັດຕັ້ງປະຕິບັດໂຄງການ ODA ໃນຂັ້ນທ້ອງຖິ່ນ.

ເພື່ອເປັນການກະກຽມໃຫ້ແກ່ກອງປະຊຸມດັ່ງກ່າວ, ກະຊວງແຜນການ ແລະ ການລົງທຶນ ໂດຍສົມທົບ ກັບບັນດາກະຊວງຂະແໜງການກ່ຽວຂ້ອງ ກໍ່ຄືບັນດາຄູ່ຮ່ວມພັດທະນາ ໄດ້ຈັດກອງປະຊຸມເພື່ອປຶກສາຫາລື ແລະ ກະກຽມບັນດາເອກະສານຕ່າງໆກ່ຽວຂ້ອງ ເຊັ່ນ:

- ກອງປະຊຸມ ຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ໃນການກະກຽມກອງປະຊຸມໂຕະມົນລະດັບສູງຄັ້ງທີ່ 11 ໃນວັນທີ່ 3 ພຶດສະພາ ແລະ ວັນທີ່ 8 ພະຈິກ 2013;
- ກອງປະຊຸມປຶກສາຫາລື ຂອງບັນດາ 10 ຫນ່ວຍງານຂະແຫນງການປຶກສາຫາລືກັບຜູ່ໃຫ້ທືນ;
- ກອງປະຊຸມໂຕະມົນຂັ້ນທ້ອງຖິ່ນ ທີ່ ແຂວງຫລວງນ້ຳທາ ໃນວັນທີ 26-27 ມິຖຸນາ 2013 ໂດຍສຸມໃສ່ປຶກສາຫາ ກ່ຽວກັບ ວຽກງານການຮັບປະກັນຄວາມໝັ້ນຄົງທາງສະບຽງອາຫານ ແລະ ໂພຊະນາການ ສຳລັບບັນດາແຂວງພາກເຫນືອ;
- ຂະບວນການແຂ່ງຂັນກິລາມິດຕະພາບ ເຕະບານ ແລະ ເປຕັງ ລະຫວ່າງ ລັດຖະບານແລະ ຄູ່ຮ່ວມພັດທະນາ
- ງານວາງສະແດງ ຜົນສຳເລັດຂອງວຽກງານການຮ່ວມມືເພື່ອການພັດທະນາ ໃນວັນທີ 18-19 ພະຈິກ 2013 ຢູ່ທີ່ຫໍປະຊຸມແຫ່ງຊາດ.

ໃນນາມຕາງໜ້າລັດຖະບານ ແຫ່ງ ສປປ ລາວ, ຂ້າພະເຈົ້າ ເຊື່ອໝັ້ນວ່າ ການຈັດກອງປະຊຸມໂຕະມົນ ລະດັບສູງ ໃນຄັ້ງນີ້ ຈະສາມາດດຳເນີນໄປດ້ວຍບັນຍາກາດທີ່ຟົດຟື້ນ, ສ້າງສັນ ແລະ ຈະເປັນນິມິດໝາຍອີກຄັ້ງໜຶ່ງ ໃນການຢ້ຳເຖິງ ຄວາມ ເປັນເຈົ້າການ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຕ່າງໆ ຂອງລັດຖະບານ ກໍ່ຄື ການພົວພັນ ຮ່ວມມືກັບ ສາກົນ.

ຂໍສະແດງຄວາມຍິນດີຕ້ອນຮັບບັນດາທ່ານ ແຂກຜູ້ມີກຽດ ທີ່ຕາງໜ້າໃຫ້ກະຊວງຂະແໜງການ ຈາກ ສູນກາງ ແລະ ທ້ອງຖິ່ນ, ບັນດາຄູ່ຮ່ວມພັດທະນາ ທີ່ມີຫ້ອງການຕາງໜ້າ ປະຈຳຢູ່ ສປປ ລາວ, ປະຈຳພາກພື້ນ ແລະ ສຳນັກງານ ໃຫຍ່ ທີ່ຈະເຂົ້າຮ່ວມກອງປະຊຸມໂຕະມົນ ໃນຄັ້ງນີ້.

ສຸດທ້າຍນີ້, ຂໍສະເໜີມາຍັງ ຊາວລາວທົ່ວປະເທດ ໂດຍສະເພາະ ຊາວນະຄອນຫຼວງວຽງຈັນ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຮັກສາຄວາມສະຫງົບ ແລະ ສື່ມວນຊົນຕ່າງໆ ຈົ່ງຮ່ວມກັນເປັນເຈົ້າພາບທີ່ດີ ແລະ ຕິດຕາມການ ດຳເນີນກອງປະຊຸມ ໃນຄັ້ງນີ້ ແລະ ຂໍຄວາມຮ່ວມມືຈາກພາກສ່ວນຕ່າງໆ ເພື່ອເຮັດໃຫ້ກອງປະຊຸມ ດຳເນີນໄປດ້ວຍ ບັນຍາກາດ ອັນດີ ແລະ ມີຜົນສຳເລັດຢ່າງສະຫງ່າງາມ.

ຂໍຂອບໃຈ.